ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 4717 /ກປ

ນະຄອນຫຼວງວຽງຈັນ, ວັນທີ 21 NOV 2023

# ຄຳສັ່ງ

## ກ່ຽວກັບການເພີ່ມທະວີຄວາມຮັບຜິດຊອບໃນການຄຸ້ມຄອງການ ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ຕາມດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ

ເຖິງ: - ຫ້ອງການ, ບັນດາກົມ ແລະ ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 4382/ກລປ, ລົງວັນທີ 01 ພະຈິກ 2023;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້, ລົງວັນທີ 06 ພະຈິກ 2023.

ໃນໄລຍະຜ່ານມາ, ຂະແໜງການກະສິກຳ ແລະ ປ່າໄມ້ແຕ່ລະຂັ້ນ ໄດ້ເອົາໃຈໃສ່ຄຸ້ມຄອງການ ນຳເຂົ້າ, ສົ່ງອອກ, ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ຕາມດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ຕາມລະບຽບກົດໝາຍກ່ຽວຂ້ອງໄດ້ດີພໍສົມຄວນ ອັນໄດ້ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ເວົ້າລວມ, ເວົ້າສະເພາະ ແມ່ນການພັດທະນາເສດຖະກິດຂອງທ້ອງຖິ່ນ ໃຫ້ມີການເຕີບໃຫຍ່ຂະຫຍາຍຕົວເປັນກ້າວໆມາ. ສະເພາະໃນໄລຍະ 9 ເດືອນ ຂອງປີ 2023 ໄດ້ມີການອະນຸຍາດສົ່ງອອກສັດປະເພດ ງົວ, ຄວາຍ, ໝູ ແລະ ແບ້ ຈຳນວນ 151.790 ໂຕ, ສັດປີກຫຼາຍກວ່າ 2.590.000 ໂຕ; ອະນຸຍາດສົ່ງຜ່ານສັດໃຫຍ່ ຫຼາຍກວ່າ 44.700 ໂຕ, ສັດປີກ 861.000 ໂຕ ສ້າງລາຍຮັບໄດ້ຫຼາຍກວ່າ 61 ລ້ານໂດລາສະຫະລັດ. ເຖິງຢ່າງໃດກໍຕາມ, ຄຽງຄູ່ກັບດ້ານຕັ້ງໜ້າດັ່ງກ່າວ ກໍຍັງມີປະກົດການ ລັກລອບນຳເຂົ້າສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ຍັງມີບາງທ້ອງຖິ່ນອະນຸຍາດໃຫ້ນຳເຂົ້າສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ໂດຍບໍ່ຖືກຕ້ອງຕາມພາລະບົດບາດ ແລະ ລະບຽບການທີ່ກຳນົດໄວ້ ຊຶ່ງເຮັດໃຫ້ມີຄວາມສ່ຽງສູງ ຕໍ່ການແຜ່ລະບາດຂອງພະຍາດສັດ ເປັນຕົ້ນແມ່ນ ພະຍາດໄຂ້ຫວັດສັດປີກ, ພະຍາດອະຫິວາໝູອາຟຣິກາ, ພະຍາດປາກເປື່ອຍລີ້ນເປັນ, ພະຍາດຜິວໜັງອັກເສບຕິດຕໍ່ ງົວ, ຄວາຍ ແລະ ອື່ນໆ ລວມ

ທັງການຈຳໜ່າຍຜະລິດຕະພັນສັດຢູ່ຕາມທ້ອງຕະຫຼາດ ທີ່ຍັງກວດພົບເຫັນສານຕົກຄ້າງຫຼາຍຊະນິດ ເກີນມາດຕະຖານທີ່ກຳນົດໄວ້ ຊຶ່ງເປັນອັນລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກອີກດ້ວຍ.

ເພື່ອເຮັດໃຫ້ການຄຸ້ມຄອງການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ມີຄວາມຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ແນໃສ່ຫຼຸດຜ່ອນຄວາມສ່ຽງຕໍ່ການແຜ່ລະບາດຂອງພະຍາດສັດ ເຂົ້າມາໃນປະເທດ, ຮັບປະກັນດ້ານຄຸນນະພາບຂອງອາຫານ ແລະ ມີຄວາມປອດໄພຕໍ່ຜູ້ບໍລິໂພກ ພ້ອມທັງເປັນການປົກປ້ອງ ແລະ ສົ່ງເສີມການລ້ຽງສັດ ຢູ່ພາຍໃນປະເທດໃຫ້ມີການຂະຫຍາຍຕົວ ແລະ ສາມາດທົດແທນການນຳເຂົ້າຈາກຕ່າງປະເທດນັ້ນ,

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ສືບຕໍ່ໂຄສະນາ, ເຜີຍແຜ່ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016, ດຳລັດ ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ສະບັບເລກທີ 230/ລບ, ລົງວັນທີ 04 ມີນາ 2012 ແລະ ຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ສະບັບເລກທີ 0795/ກປ, ລົງວັນທີ 18 ເມສາ 2019 ລວມທັງນິຕິກຳ ແລະ ຄູ່ມືອື່ນທີ່ກ່ຽວຂ້ອງ ໃຫ້ການຈັດຕັ້ງພາກລັດ ແລະ ພາກເອກະຊົນ ທີ່ດຳເນີນທຸລະກິດກ່ຽວກັບສັດ ໃນຂອບເຂດທົ່ວປະເທດໃຫ້ຊາບທົ່ວເຖິງກັນ ຕິດພັນກັບການເອົາໃຈໃສ່ຄຸ້ມຄອງການ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ຢ່າງເຂັ້ມງວດ;
2. ໃຫ້ ກົມລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ, ດ່ານກວດກາສັດຕະວະແພດ ແລະ ພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ເກັບກຳຂໍ້ມູນ, ຕິດຕາມ, ກວດກາ ແລະ ສະກັດກັ້ນ ການລັກລອບນຳເຂົ້າສັດ ແລະ ຜະລິດຕະພັນສັດ. ຖ້າຫາກພົບເຫັນມີການລັກລອບນຳເຂົ້າສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ແມ່ນໃຫ້ນຳໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ທີ່ວາງອອກຢ່າງເຂັ້ມງວດ;
3. ໃຫ້ ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ເອົາໃຈໃສ່ປະຕິບັດຕາມມາດຕາ 23 ແລະ ມາດຕາ 24 ຂອງຂໍ້ຕົກລົງ ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ສະບັບເລກທີ 0795/ກປ, ລົງວັນທີ 18 ເມສາ 2019 ຢ່າງເຂັ້ມງວດ ໂດຍສະເພາະການອອກ, ໂຈະ ຫຼື ຖອນໃບອະນຸຍາດ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ແມ່ນສິດຂອງກົມລ້ຽງສັດ ແລະ ການປະມົງເທົ່ານັ້ນ; ສ່ວນພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຄົ້ນຄວ້າ ແລະ ສະເໜີຫາ ກົມລ້ຽງສັດ ແລະ ການປະມົງ ເພື່ອພິຈາລະນາອອກ, ໂຈະ ຫຼື ຖອນໃບອະນຸຍາດ ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ;
4. ໃຫ້ ກົມລ້ຽງສັດ ແລະ ການປະມົງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ເພື່ອຊີ້ນຳ ແລະ ຊຸກຍູ້ເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຍົກສູງຄວາມຮັບຜິດຊອບໃນການກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ຢ່າງເຂັ້ມງວດ ຕິດພັນກັບການປັບປຸງລະບົບຄວບຄຸມ, ຕິດຕາມ ແລະ ກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດຄືນໃໝ່ ໃຫ້ຮັດກຸມ ແລະ ມີການລາຍງານຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;
5. ໃຫ້ ກົມລ້ຽງສັດ ແລະ ການປະມົງ ຄົ້ນຄວ້າອອກແຈ້ງການເຖິງ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ, ດ່ານກວດກາສັດຕະວະແພດ ແລະ ຜູ້ປະກອບການ ໃນຂອບເຂດທົ່ວປະເທດ ເພື່ອໃຫ້ຮັບຮູ້ຂໍ້ມູນ

ກ່ຽວກັບສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ທາງການສາມາດອະນຸຍາດໃຫ້ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານໄດ້ ໃນແຕ່ລະໄລຍະ ເພື່ອຮັບປະກັນຄວາມຖືກຕ້ອງ, ວ່ອງໄວ ແລະ ທັນການ;

6. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແນະນໍາໃຫ້ຜູ້ປະກອບການ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ຢູ່ໃນລາຍການທີ່ທາງການອະນຸຍາດ ປະກອບເອກະສານສະເໜີຂໍອະນຸຍາດຢ່າງຖືກຕ້ອງ ແລ້ວສະເໜີຫາ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ເພື່ອຄົ້ນຄວ້າ ແລະ ປະກອບຄໍາເຫັນ ກ່ອນທີ່ຈະສະເໜີໄປຫາ ກົມລ້ຽງສັດ ແລະ ການປະມົງ ພິຈາລະນາອະນຸຍາດ ຕາມຂັ້ນຕອນ;

7. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ສືບຕໍ່ເອົາໃຈໃສ່ ຊຸກຍູ້ ສົ່ງເສີມ ຂະບວນການລ້ຽງສັດ ຂອງປະຊາຊົນ ຢູ່ໃນພາຍແຂວງຂອງຕົນ ໂດຍເນັ້ນໃສ່ ປະເພດສັດລ້ຽງທີ່ມີທ່າແຮງ ແລະ ສົ່ງເສີມການລ້ຽງແບບເປັນຟາມ ດ້ວຍການນໍາໃຊ້ເຕັກນິກວິຊາການເຂົ້າມາຊ່ວຍ, ແນໃສ່ຍົກສະມັດຕະພາບຂອງການຜະລິດເພື່ອສະໜອງໃຫ້ແກ່ ການບໍລິໂພກພາຍໃນຢ່າງພຽງພໍ, ທົດແທນການນໍາເຂົ້າຈາກຕ່າງປະເທດ ແລະ ຜະລິດເປັນສິນຄ້າເພື່ອສົ່ງອອກຕ່າງປະເທດ;

8. ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ ຮັບຮ້ອນປະສານສົມທົບກັບ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ເພື່ອຈັດຕັ້ງຜັນຂະຫຍາຍຄໍາສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ ພ້ອມທັງມີການສະຫຼຸບລາຍງານ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ. ຜ່ານການຈັດຕັ້ງປະຕິບັດຕົວຈິງ, ມີຂໍຫຍຸ້ງຍາກແນວໃດ ໃຫ້ຮີບຮ້ອນລາຍງານ ກະຊວງກະສິກໍາ ແລະ ປ່າໄມ້ ເພື່ອຫາວິທີແກ້ໄຂຢ່າງທັນການ.

ຄໍາສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງກະສິກໍາ ແລະ ປ່າໄມ້ ລັດຖະມົນຕີ

ປອ. ເພັດ ພົມພິພັກ